# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ........................................ ໜ້າ 01 – 08**

**II. ການເຄື່ອນໄຫວຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ................... ໜ້າ 09 – 12**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກຸມພາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ສະຖານະການໂຄວິດ-19

ຕົວເລກຜູ້ຕິດເຊື້ອພະຍາດໂຄວິດ-19 ຢູ່ ສປປ ລາວ ໃນເດືອນ ກຸມພາ ມີທ່າອ່ຽງຫຼຸດລົງ, ປະຊາຊົນລາວສາມາດປັບໂຕໃຊ້ຊີວິດຮູບແບບໃໝ່ເປັນປົກກະຕິ; ບັນດາອົງການຈັດຕັ້ງຂອງ ພັກ-ລັດ ກໍຄືບັນດາບໍລິສັດ, ວິສາຫະກິດຕ່າງໆ ໄດ້ອະນຸຍາດໃຫ້ພະນັກງານກັບໄປເຮັດວຽກປົກກະຕິ; ທົ່ວປະເທດເລີ່ມມີການບໍລິການເປີດກ້ວາງໃຫ້ແກ່ສັງຄົມ, ເສດຖະກິດຂອງປະຊາຊົນເລີ່ມພັດທະນາດີຂຶ້ນ. ຮອດວັນທີ 28 ກຸມພາ 2022, ທົ່ວປະເທດ ສະຫຼຸບການຕິດເຊື້ອພະຍາດດັ່ງກ່າວ ຄື: ຜູ້ຕິດເຊື້ອສະສົມ 142,743 ເພີ່ມຂຶ້ນ 8,890 ຄົນ; ປິ່ນປົວຫາຍດີ 141,060 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 1,683 ຄົນ; ເສຍຊີວິດສະສົມທັງໝົດ 621 ຄົນ, ເພີ່ມຂຶ້ນ 74 ຄົນ ຫຼຸດລົງເຄິ່ງໜຶ່ງ ຖ້າທຽບໃສ່ເດືອນຜ່ານມາ. ສ່ວນການສັກວັກແຊງຕ້ານພະຍາດດັ່ງກ່າວ, ຮອດວັນທີ 28 ກຸມພາ 2022, ຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 4,306,114 (58,68%), ໄດ້ສັກເຂັມທີໜຶ່ງ 4,909,112 ຄົນ (66,90%), ບາງຈຳນວນ ກໍໄດ້ສັກເຂັມ 3 ແລ້ວ ແລະ ເລີ່ມສັກໃຫ້ເດັກນ້ອຍ ອາຍຸ 6 ປີ ຂຶ້ນໄປ.

### 2) ພັກ ປປ ລາວ ສົ່ງສານອວຍພອນ ໃນໂອກາດວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 92 ປີ

ໃນໂອກາດ ວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 92 ປີ (3/2/1930-3/2/2022), ຄະນະບໍລິຫານສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງຄຳອວຍພອນໄຊອັນປະເສີດ ແລະ ໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງອັນສະໜິດສະໜົມ ໄປຍັງຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ໄດ້ສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈຕໍ່ຜົນສຳເລັດ ແລະ ໄຊຊະນະອັນໃຫຍ່ຫຼວງຮອບດ້ານທີ່ພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ຕະຫຼອດໄລຍະ 92 ປີ ຜ່ານມາ ແລະ ເຊື່ອໝັ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ຂອງ ພັກກອມມູນິດຫວຽດນາມ ອັນມີ ສະຫາຍເລຂາທິການໃຫຍ່ ຫງວຽນ ຟູຈ້ອງ ເປັນຜູ້ນຳໜ້າໃນປັດຈຸບັນ, ປະຊາຊົນຫວຽດນາມອ້າຍນ້ອງ ຈະສືບຕໍ່ຍາດໄດ້ໄຊຊະນະ ແລະ ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດບັນດາມະຕິທີ່ກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ວາງອອກ. ພັກກອມມູນິດຫວຽດນາມ ສ້າງຕັ້ງຂຶ້ນ ພາຍໃຕ້ການນຳພາ ຂອງ ປະທານ ໂຮ່ຈິມິນ ຜູ້ຍິ່ງໃຫຍ່ ຊຶ່ງເປັນບາດລ້ຽວປະຫວັດສາດ ທີ່ສຳຄັນຂອງການປະຕິວັດຫວຽດນາມ, ໄດ້ນຳພາພາລະກິດປະຕິວັດຢ່າງອົງອາດກ້າແກ່ນ ແລະ ປະດິດສ້າງ ດ້ວຍການວາງແນວທາງທີ່ຖືກຕ້ອງສະຫຼາດສ່ອງໃສ ແລະ ຍາດໄດ້ໄຊຊະນະອັນເປັນປະຫວັດການໃນການຕໍ່ສູ້ປົດປ່ອຍຊາດ, ທ້ອນໂຮມປະເທດຊາດ ຢ່າງສົມບູນໃນປີ 1975 ແລະ ຜົນສຳເລັດໃນໄລຍະໃໝ່ ໃນການສືບຕໍ່ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດຫວຽດນາມ ຕາມທິດສັງຄົມນິຍົມ, ໂດຍສະເພາະແມ່ນໃນໄລຍະ 35 ປີ ແຫ່ງການປະຕິບັດແນວທາງການປ່ຽນແປງໃໝ່.

### 3) ປະທານປະເທດ ລົງຢ້ຽມຢາມທ້ອງຖິ່ນ

ວັນທີ 6-9/02/2022, ທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ລົງພົບປະຢ້ຽມຢາມ, ໂອ້ລົມພະນັກງານຫຼັກແຫຼ່ງຂອງແຂວງຫຼວງນ້ຳທາ ແລະ ແຂວງຜົ້ງສາລີ. ໃນໂອກາດດັ່ງກ່າວ ທ່ານ ທອງລຸນ ສີສຸລິດ ໄດ້ຮັບຟັງການລາຍງານຫຍໍ້ ກ່ຽວກັບຈຸດພິເສດຂອງແຂວງ, ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫ່ຍຂອງອົງຄະນະພັກແຂວງ ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງ ແຂວງຫຼວງນ້ຳທາ ແລະ ແຂວງຜົ້ງສາລີ. ທ່ານ ທອງລຸນ ສີສຸລິດ ຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ການນຳທຸກຂັ້ນຍາດມາໄດ້ ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ຫຼາຍບັນຫາ ເປັນຕົ້ນແມ່ນເອົາໃຈໃສ່ເພີ່ມທະວີວຽກງານປ້ອງກັນຊາດ ປ້ອງກັນຄວາມ

ສະຫງົບ, ການພັດທະນາເສດຖະກິດສັງຄົມ ແລະ ແຜນສູ້ຊົນໃນຕໍ່ໜ້າ ໃຫ້ບັນລຸຕາມລະດັບຄາດໝາຍ, ເອົາໃຈໃສ່ແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຫຼຸດໜ້ອຍຖອຍລົງ ແລະ ເພີ່ມທະວີຄວາມສາມັກຄີໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

**4) ຜົນສຳເລັດກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກຸມພາ 2022**

ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນກຸມພາ ປີ 2022 ໄດ້ເປີດຂຶ້ນໃນວັນທີ 21-22 ກຸມພາ 2022 ທີ່ ສຳນັກງານນາຍົກລັດຖະມົນຕີ, ພາຍໃຕ້ການເປັນປະທານຂອງ ທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ, ມີບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານເຂົ້າຮ່ວມ. ກອງປະຊຸມ ໄດ້ເຫັນດີດ້ານຫຼັກການ ຮັບຮອງເອົາ ຮ່າງແຜນການລົງທຶນຂອງລັດ ປະຈຳປີ 2022; ຮ່າງດຳລັດວ່າດ້ວຍການຄຸ້ມຄອງການຄ້າຂາຍຊະນິດພັນສັດນໍ້າ, ສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ; ຮ່າງດຳລັດວ່າດ້ວຍ ສະຖາບັນການເງິນຈຸລະພາກ (ສະບັບປັບປຸງ); ຮ່າງຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ (2021-2030) ແລະ ວິໄສທັດຮອດປີ 2035 ສະບັບປັບປຸງ; ຮ່າງຍຸດທະສາດ ການພັດທະນາການບິນພົນລະເຮືອນ 2021-2025 ວິໄສທັດຮອດ 2030; ເອກະສານການສ້າງລະບົບຄຸ້ມຄອງຕົວຕົນທາງ ດີຈີຕອນ (DIGITAL ID); ຮ່າງແຜນຄຸ້ມຄອງອ່າງຮັບນໍ້າ, ນໍ້າອູ, ນໍ້າງື່ມ ແລະ ນໍ້າເທີນ-ນໍ້າກະດິງ. ນອກນັ້ນ ໄດ້ກວດກາຄືນບັນດານິຕິກຳ ທີ່ໄດ້ປະກາດນຳໃຊ້ໃນໄລຍະຜ່ານມາ ເພື່ອໃຫ້ສອດຄ່ອງກົມກຽວກັນ. ສຳລັບແຜນວຽກຈຸດສຸມປະຈຳເດືອນ ມີນາ 2022, ລັດຖະບານ ສືບຕໍ່ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເປັນຮູບປະທຳຫຼາຍຂຶ້ນ ໂດຍສະເພາະແມ່ນ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການນຳໃຊ້ລົດລັດ, ການແກ້ໄຂລົດ ທີ່ນຳໃຊ້ບໍ່ຖືກຕ້ອງຕາມກົດໝາຍ, ການແກ້ໄຂຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ, ການຂຸດຄົ້ນແຮ່ທາດ, ການສົ່ງອອກສິນຄ້າຢູ່ດ່ານຊາຍແດນ ແລະ ບັນຫາທີ່ດິນໄປຄຽງຄູ່ກັບການດຳເນີນມາດຕະການປ້ອງກັນ, ຄວບຄຸມແລະແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19.

**5). ລັດຖະມົນຕີຕ່າງປະເທດ ຢ້ຽມຢາມ ກຳປູເຈຍ ຢ່າງເປັນທາງການ**

ທ່ານ ສະເຫຼີມໄຊ ກົມມະສິດ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະໄດ້ເດີນທາງຢ້ຽມຢາມຣາຊະອານາຈັກກຳປູເຈຍ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນແບບວົງແຄບ ໃນລະຫວ່າງວັນທີ 15-17/2/2022. ສອງຝ່າຍໄດ້ປຶກສາຫາລື ແລະ ທົບທວນຄືນການຜັນຂະຫຍາຍຜົນການຢ້ຽມຢາມທາງການຂອງນາຍົກລັດຖະມົນຕີ ສປປ ລາວ ໄປຍັງກຳປູເຈຍ ໃນເດືອນພະຈິກ 2021 ຜ່ານມາ, ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອຖານບ້ານໃກ້ເຮືອນຄຽງມາແຕ່ດົນນານ ລະຫວ່າງ ປະຊາຊົນສອງຊາດ ລາວ-ກຳປູເຈຍ ທີ່ນັບມື້ໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງແໜ້ນແຟ້ນ, ສອງປະເທດ ໄດ້ຍົກລະດັບການພົວພັນເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ໃນປີ 2019 ແລະ ໃນປີ 2021 ຜ່ານມາ, ສອງຝ່າຍ ໄດ້ຮ່ວມກັນຈັດພິທີສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 65 ປີຢ່າງຟົດຟື້ນ. ສອງຝ່າຍເຫັນດີສືບຕໍ່ຊຸກຍູ້ບັນດາຂະແໜງການກ່ຽວຂ້ອງຂອງສອງຝ່າຍ ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ຂອງ ຄະນະກຳມາທິການຮ່ວມມື ວ່າດ້ວຍການຮ່ວມມືສອງຝ່າຍ (JC) ຄັ້ງທີ 13, ລົງນາມໃນຕົ້ນປີ 2019 ໃຫ້ເປັນຮູບປະທຳ ແລະ ກະກຽມກອງປະຊຸມ JC ຄັ້ງທີ 14 ທີ່ຝ່າຍກຳປູເຈຍ ຈະເປັນເຈົ້າພາບ, ສືບຕໍ່ຮ່າງແຜນປະຕິບັດງານຮ່ວມ (Action Plan) ໃຫ້ສຳເລັດໂດຍໄວ, ຊຸກຍູ້ໃຫ້ສອງຝ່າຍ ປຶກສາຫາລືກັນ ເພື່ອໃຫ້ສຳເລັດວຽກງານປັກຫຼັກໝາຍຊາຍແດນ ລາວ-ກຳປູເຈຍ ທີ່ຍັງຄົງຄ້າງ, ຮັກສາຄວາມເປັນລະບຽບຮຽບຮ້ອຍຕາມບໍລິເວນຊາຍແດນຮ່ວມກັນ, ເພີ່ມທະວີການຮ່ວມມືສອງຝ່າຍໃຫ້ຫຼາຍຂຶ້ນ ໃນຂົງເຂດການຄ້າ, ການລົງທຶນ, ການບໍລິການທ່ອງທ່ຽວ, ພະລັງງານໄຟຟ້າ ໂດຍສະເພາະແມ່ນການຊື້ຂາຍໄຟຟ້າພະລັງນໍ້າ ແລະ ຖ່ານຫີນ ຈາກ ສປປ ລາວ ໄປຍັງ ກຳປູເຈຍ ໃນອະນາຄົດ, ສືບຕໍ່ການຮ່ວມມື ແລະ ສະ ໜັບສະໜູນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ.

## 2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 7/2/2022, ສະຫາຍ ເວືອງ ດິ່ງ ເຫວະ, ກຳມະການກົມການເມືອງ, ປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມ ແລະ ເຮັດວຽກກັບກົມໃຫຍ່ກອງທັບທີ II, ກະຊວງປ້ອງກັນຊາດຫວຽດນາມ, ໄດ້ຕີລາສູງ ແລະ ຊົມເຊີຍຜົນສຳເລັດຂອງກົມໃຫຍ່ກອງທັບ II ທີ່ຍາດມາໄດ້ໃນປີ 2021 ໃນສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19, ພາຍໃຕ້ການຊີ້ນຳ ນຳພາ ຂອງຄະນະພັກກົມໃຫຍ່ກອງທັບ II, ແຕ່ລະພາກສ່ວນ ໄດ້ຜ່ານຜ່າທຸກຄວາມຫຍຸ້ງຍາກ, ມີຄວາມເດັດຂາດໃນການຊີ້ນຳກົມກອງເຮັດສຳເລັດໜ້າທີ່ການເມືອງ, ແນວຄິດ, ຄຸນສົມບັດ, ການຈັດຕັ້ງ ແລະ ພະນັກງານທີ່ມີຄຸນທາດເປັນ "ທະຫານລຸງໂຮ່" ແລະ ສົມເປັນກອງກຳລັງອັນໝັ້ນແກ່ນຂອງພັກ, ລັດ ແລະ ກອງທັບຫວຽດນາມ, ໃຫ້ສືບຕໍ່ປະຕິບັດເຊື່ອມຊຶມບັນດາມະຕິ, ຄຳສັ່ງຂອງຂັ້ນເທິງ ໂດຍສະເພາະແມ່ນ ມະຕິ 48 ຂອງກົມການເມືອງ ແລະ ມະຕິ 160 ຂອງ ຄະນະປະຈຳພັກກອງທັບສູນກາງຢ່າງຕັ້ງໜ້າ, ສູ້ຊົນສຳເລັດໜ້າທີ່ການເມືອງຮັບປະກັນໄດ້ໝາກຜົນປີ 2022 ຕ້ອງສູງກວ່າ ປີ 2021.

ວັນທີ 10/2/2022, ຄະນະຊີ້ນຳກໍ່ສ້າງໂຄງການ "ສະຫຼຸບສັງລວມ 10 ປີ ການປະຕິບັດມະຕິສູນກາງ 8 ສະໄໝທີ XI ກ່ຽວກັບຍຸດທະສາດປ້ອງກັນຊາດໃນໄລຍະໃໝ່" ໄດ້ເປີດກອງປະຊຸມຄັ້ງປະຖົມມະເລີກ ໂດຍການເປັນປະທານ ຂອງ ສະຫາຍ ຫງວຽນຊວັນຟຸກ, ກຳມະການກົມການເມືອງ, ປະທານປະເທດ ແຫ່ງ ສສ ຫວຽດນາມ, ປະທານສະພາປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຫົວໜ້າຄະນະຊີ້ນຳໃນການກໍ່ສ້າງໂຄງການດັ່ງກ່າວ, ມີບັນດາການນຳຂັ້ນສູງພັກ, ລັດ ເຂົ້າຮ່ວມ. ກອງປະຊຸມ ໄດ້ຜ່ານຂໍ້ຕົກລົງຂອງກົມການເມືອງ ວ່າດ້ວຍການສ້າງຕັ້ງຄະນະຊີ້ນຳໂຄງ ການດັ່ງກ່າວ ໃນການຈັດຕັ້ງປະຕິບັດຍຸດທະສາດປ້ອງກັນຊາດໃນໄລຍະໃໝ່; ພ້ອມທັງ ເປັນການສຳຫຼວດກວດກາ, ຕີລາຄາສະພາບການຢ່າງຮອບດ້ານ ແລະ ຜົນສຳເລັດການຈັດຕັ້ງປະຕິບັດມະຕິ ໃນຕະຫຼອດ 10 ປີ ຜ່ານມາ ແລະ ຕີລາຄາຈຸດອ່ອນ, ຂໍ້ຄົງຄ້າງ ກໍ່ຄືຜົນສຳເລັດອັນພົ້ນເດັ່ນ, ສາເຫດ ແລະ ບັນດາບົດຮຽນ ເພື່ອເປັນການປະກອບສ່ວນຍົກສູງການຮັບຮູ້ຂອງຄະນະໜ່ວຍພັກ, ອົງການຈັດຕັ້ງພັກ, ພະນັກງານສະມາຊິກພັກ, ກຳລັງປະກອບອາວຸດ ຕໍ່ໜ້າທີ່ປ້ອງກັນຊາດ, ທິດທາງເປົ້າໝາຍຈົນເຖິງປີ 2035 ແລະ ຊຸມປີຕໍ່ໜ້າ.

### 2). ພັກກອມມູນິດຈີນ

ວັນທີ 5/2/2022, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປ ຈີນ ໄດ້ສົ່ງສານອວຍພອນເຖິງກອງປະຊຸມສຸດຍອດສະຫະພາບອາຟຣິກາ ຄັ້ງທີ 35 ແລະ ຄົບຮອບ 20 ປີແຫ່ງການສ້າງຕັ້ງສະຫະພາບອາຟຣິກາ, ໄດ້ສະແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ປະເທດ ແລະ ປະຊາຊົນອາຟຣິກກາ ທີ່ໄດ້ເຊີດຊູຄັນທຸງຮ່ວມກັນສ້າງຕົນໃຫ້ເຂັ້ມແຂງ, ຕັ້ງໜ້າຊອກຫາເສັ້ນທາງພັດທະນາທີ່ສອດຄ່ອງກັບອາຟຣິກກາ, ຊຸກຍູ້ການກໍ່ສ້າງປະຊາຄົມໃນພາກພື້ນ ແລະ ໄດ້ຮັບຜົນສຳເລັດອັນສຳຄັນ, ສາມັກຄີກັນຕ້ານກັບການແຜ່ລະບາດຂອງພະຍາດໂຄວິດ-19, ຮັກສາໄດ້ສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຂອງອາຟຣິກາ ຢ່າງແຂງແຮງ, ຊຸກຍູ້ໃຫ້ຖານະຂອງອາຟຣິກກາ ໃນເວທີສາກົນ ໄດ້ຮັບການຍົກສູງ ຢ່າງຕໍ່ເນື່ອງ. ປີ 2021 ເປັນປີທີ່ສາຍພົວພັນ ຈີນ- ອາຟຣິກກາ ໄດ້ຂະຫຍາຍຕົວຢ່າງຟົດຟື້ນ ໂດຍໄດ້ເປີດກອງປະຊຸມລະດັບລັດຖະມົນຕີ ຄັ້ງທີ 8 ຂອງເວທີປຶກສາຫາລືການຮ່ວມມື ຈີນ-ອາຟຣິກກາ, ເຊິ່ງໄດ້ປະກາດ "9 ໂຄງການ" ທີ່ຈະຮ່ວມມືກັນໃນ 3 ປີຕໍ່ໜ້າ ແລະ ຮ່ວມກັນສະໜັບສະໜູນການສ້າງປະຊາຄົມຮ່ວມຊາຕາກຳ ຈີນ-ອາຟຣິກກາ ໃນຍຸກໃໝ່. ພາຍໃຕ້ສະຖານະການໃໝ່, ຝ່າຍຈີນ ຍິນດີຮ່ວມກັບຝ່າຍອາຟຣິກກາ ຢ່າງຕັ້ງໜ້າ ແລະ ພ້ອມຈັດຕັ້ງປະຕິບັດໝາກຜົນຂອງກອງປະຊຸມເວທີປຶກສາຫາລືໃຫ້ປະກົດຜົນເປັນຈິງ, ຊຸກຍູ້ການຮ່ວມມືສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" , ຂໍ້ລິເລີ່ມການພັດທະນາຂອງ ໂລກ ຮອດປີ 2063 ຂອງ ສະຫະພາບອາຟຣິກກາ ແລະ ການກໍ່ສ້າງເຂດການຄ້າເສລີລົງເລິກເຊື່ອມໂຍງເຂົ້າກັນ, ນຳພາການຮ່ວມມື ລະຫວ່າງ ຈີນ-ອາຟຣິກກາ

ຂະຫຍາຍຕົວໄປສູ່ຂົງເຂດທີ່ມີຄຸນນະພາບສູງ ແລະ ກວ້າງຂວາງກວ່າເກົ່າ ເພື່ອສືບຕໍ່ຂຽນປະຫວັດສາດໜ້າໃໝ່ແຫ່ງມິດຕະພາບ ຈີນ-ອາຟຣິກາ.

**3). ພັກແຮງງານເກົາຫຼີ**

ກອງປະຊຸມຄັ້ງທີ 6 ຂອງສະພາປະຊາຊົນສູງສຸດ ສປປ ເກົາຫຼີ ຊຸດທີ 14 ໄດ້ໄຂຂຶ້ນໃນວັນທີ 6-7/02/2022. ກອງປະຊຸມ ໄດ້ທົບທວນການປະຕິບັດຍຸດທະສາດຈຸເຊ 110 (2021) ແລະ ວາງແຜນຍຸດທະສາດ ຈຸເຊ 111 (2022); ຮັບຟັງລາຍງານ ແລະ ຮັບຮອງເອົາການປະຕິບັດແຜນງົບປະມານແຫ່ງລັດ 2021 ແລະ ແຜນປີ 2022; ພິຈາລະນາ ຮັບຮອງເອົາການປັບປຸງກົດໝາຍວ່າດ້ວຍການເບິ່ງແຍງເດັກນ້ອຍ ແລະ ກົດໝາຍວ່າດ້ວຍການປົກປ້ອງຜົນປະໂຫຍດ ແລະ ສິດທິ ຂອງ ພີ່ນ້ອງຮ່ວມຊາດຢູ່ຕ່າງປະເທດ.

ວັນທີ 13/2/2022, ສປປ ເກົາຫຼີ ໄດ້ເລີ່ມໂຄງການກໍ່ສ້າງຕຶກຫ້ອງແຖວຈໍານວນ 10,000 ຫ້ອງ ໃນເຂດ Hwangsong ເຊິ່ງນອນຢູ່ໃນແຜນການກໍ່ສ້າງຫ້ອງແຖວ 50,000 ຫ້ອງ ຢູ່ ນະຄອນຫຼວງພຽງຢາງ ເພື່ອເປັນການສະເຫຼີມສະຫຼອງວັນຄ້າຍວັນເກີດຂອງ ປະທານ ກິມເຈິງອິນ ຄົບຮອບ 80 ປີ, ເປັນການປະຕິບັດຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ 8 ແລະ ການຕົກລົງເຫັນດີໃນກອງປະຊຸມຄົບຄະນະ ຄັ້ງທີ 4 ຂອງ ພັກແຮງງານເກົາຫຼີ. ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ໄດ້ເປັນປະທານໃນພິທີເປີດໂຄງການກໍ່ສ້າງ ແລະ ໄດ້ກ່າວຄໍາປາໄສໃນຫົວຂໍ້ “ໃຫ້ພວກເຮົາ ເພີ່ມພູນຄູນສ້າງຍຸກທອງຂອງນະຄອນຫຼວງ ໂດຍການນໍາເອົາການປ່ຽນແປງທາງທະເລ ໃນເຂດ Hwangsong”, ມີບັນດາການນໍາຂັ້ນສູງພັກ, ລັດ ສປປ ເກົາຫຼີ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມພິທີດັ່ງກ່າວ.

ວັນທີ 22/2/2022, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ສປປ ເກົາຫຼີ ໄດ້ສົ່ງສານຊົມເຊີຍເຖິງ ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປ ຈີນ ເພື່ອສະແດງຄວາມຍິນດີຕໍ່ຜົນສໍາເລັດ ຂອງ ສປ ຈີນ ໃນການເປັນເຈົ້າພາບ ຈັດການແຂ່ງຂັນກິລາໂອລິມປິກລະດູໜາວ ທີ່ນະຄອນຫຼວງປັກກິ່ງ. ສໍາລັບ ສປປ ເກົາຫຼີ ແມ່ນບໍ່ໄດ້ເຂົ້າຮ່ວມການແຂ່ງຂັນກິລາໂອລິມປິກໃນຄັ້ງນີ້, ພາຍຫຼັງ ຄະນະກໍາມະການສາກົນໄດ້ຕັດສິນລະງັບການແຂ່ງຂັນກິລາ ຂອງ ສປປ ເກົາຫຼີ ທີ່ເປັນການລົງໂທດຕໍ່ການປະຕິເສດການເຂົ້າຮ່ວມກິລາ ທີ່ນະຄອນຫຼວງໂຕກຽວ ໃນປີທີ່ຜ່ານມາ. ພ້ອມກັນນັ້ນ, ຜູ້ນໍາ ສປປ ເກົາຫຼີ ໄດ້ກ່າວວ່າ ສປປ ເກົາຫຼີ ແລະ ສປ ຈີນ ໄດ້ເສີມຂະຫຍາຍການພົວພັນຮ່ວມມືທາງດ້ານຍຸດທະສາດ ແລະ ຄວາມສາມັກຄີໃນລະດັບທະວີພາຄີ ແລະ ໃຫ້ຄໍາໝັ້ນວ່າ ຈະເພີ່ມທະວີການພົວພັນຮ່ວມມືລະຫວ່າງ ສປປ ເກົາຫຼີ ແລະ ສປ ຈີນ ໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າ.

**4). ພັກກອມມູນິດກູບາ**

ວັນທີ 10 ກຸມພາ 2022, ສະຫາຍ Miguel Daiz-canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ, ເປັນປະທານກອງປະຊຸມກົມການເມືອງສູນກາງພັກກອມມູນິດກູບາ ປະຈໍາປີ 2022, ເຊິ່ງໄດ້ປຶກສາຫາລື ກ່ຽວກັບການຜັນຂະຫຍາຍແບບແຜນເຮັດວຽກຂອງລັດຖະບານໃນແຕ່ລະຂັ້ນ ດ້ວຍການລົງຮາກຖານເພື່ອໃກ້ຊິດຕິດແທດ ແລະ ຮຽນຮູ້ເຖິງຄວາມຕ້ອງການຂອງປະຊາຊົນ, ພົບປະກັບນັກທຸລະກິດທີ່ຕິດພັນກັບບັນດາຂະແໜງການ ແລະ ຊອກຫາວິທີແກ້ໄຂ, ຊຸກຍູ້ການນໍາໃຊ້ອຸປະກອນ ແລະ ວັດຖຸດິບທີ່ມີຢູ່ ຫຼື ສາມາດຜະລິດໄດ້ພາຍໃນແຂວງຂອງຕົນ, ນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາໃໝ່ເຂົ້າໃນຂະບວນການຜະລິດ ໂດຍສະເພາະ ຂະແໜງອຸດສະຫະກໍາເຕັກໂນໂລຊີຊີວະພາບ ທີ່ເປັນຂະແໜງການເຂັ້ມແຂງ ບວກກັບລະບົບສາທາລະນະສຸກ ແລະ ຊັບພະຍາກອນມະນຸດທີ່ມີຄຸນນະພາບ ກັບເງື່ອນໄຂທີ່ເອື້ອອໍານວຍ ສາມາດພັດທະນາວັກຊີນຕ້ານໂຄວິດ-19 ໄດ້ 5 ຊະນິດ ແລະ ປັດຈຸບັນ ມີປະຊາກອນຫຼາຍກວ່າ 88% ໄດ້ຮັບການສັກຢາປ້ອງກັນ 3 ເຂັມແລ້ວ.

ໃນວັນທີ 12-19 ກຸມພາ 2022, ທ່ານ Heinz Bierbaum, ປະທານພັກການເມືອງຝ່າຍຊ້າຍເອີຣົບພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ສ.ກູບາ ຢ່າງເປັນທາງການ, ພົບປະກັບ ທ່ານ Ángel Arzuaga, ຮອງຫົວໜ້າ ແລະ ຜູ້ປະສານງານຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ. ສອງຝ່າຍເຫັນດີຈະເຮັດວຽກຮ່ວມກັນ ເພື່ອສ້າງສັນຕິພາບ, ການພັດທະນາແບບຍືນຍົງ, ຄວາມເປັນເອກະພາບ, ການເຂົ້າເຖິງລະບົບສາທາລະນະສຸກແບບເສລີ, ສືບຕໍ່ກົນໄກການປະສານງານ ຂອງຂະບວນການຝ່າຍຊ້າຍ ແລະ ການຕໍ່ສູ້ຕ້ານກັບລັດທິຈັກກະພັດນິຍົມ. ທ່ານ Ángel

Arzuaga ໄດ້ຂອບໃຈຕໍ່ພັກການເມືອງຝ່າຍຊ້າຍເອີຣົບ ທີ່ສະໜັບສະໜູນລັດຖະບານກູບາ, ສາມັກຄີກັບປະຊາຊົນກູບາ ແລະ ໄດ້ປະນາມບາງປະເທດຕາເວັນຕົກ ໃນການໃສ່ຮ້າຍປ້າຍສີທາງສື່ອອນລາຍ ເພື່ອຕ້ານກູບາ. ນອກນັ້ນ, ຄະນະຜູ້ແທນຍັງໄດ້ເຂົ້າຢ້ຽມຂໍ່ານັບ ທ່ານ Miguel Díaz-Canel, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສ.ກູບາ. ພັກການເມືອງຝ່າຍຊ້າຍເອີຣົບ ເປັນອົງການຈັດຕັ້ງທາງການເມືອງໃນເອີຣົບ, ສ້າງຕັ້ງຂຶ້ນໃນປີ 2004, ປະກອບ ດ້ວຍ 30 ພັກການເມືອງໃນເອີຣົບ ທີ່ສະໜັບສະໜູນສັນຕິພາບ, ປົກປ້ອງສິດທິມະນຸດ ແລະ ຄວາມສາມັກຄີ.

**5). ປ໊ອກຕຸຍການ**

ການເລືອກຕັ້ງທົ່ວໄປ ປ໊ອກຕຸຍການ ໄດ້ຈັດຂຶ້ນ ໃນວັນທີ 31/01/2022, ເຊິ່ງ ພັກສັງຄົມນິຍົມ (Socialist Party) ນຳພາໂດຍ ທ່ານ Antonio Costa, ນາຍົກລັດຖະມົນຕີ ສາມາດຍາດໄດ້ສຽງສ່ວນຫຼາຍໃນສະພາ ດ້ວຍຄະແນນ 117/230 ສຽງ (ເພີ່ມຂຶ້ນຈາກ 108 ບ່ອນນັ່ງ ໃນການເລືອກຕັ້ງປີ 2019(; ພັກ Social Democrats ໄດ້ 76 ສຽງ; ພັກ Chega ໄດ້ 12 ສຽງ; ພັກ Liberal Initiative ໄດ້10 ສຽງ; ພັກ communist ໄດ້ 6 ສຽງ. ທ່ານ Antonio Costa, ນາຍົກລັດຖະມົນຕີ, ຜູ້ນຳພັກສັງຄົມນິຍົມ ເປັນພັກການເມືອງອ່ຽງຊ້າຍ ມີຄຳເຫັນວ່າ ພັກສາມາດຍາດໄດ້ສຽງສ່ວນຫຼາຍໃນສະພາ ກໍ່ບໍ່ໝາຍຄວາມວ່າຈະສາມາດຄຸມອຳນາດໄດ້ໝົດ, ແຕ່ສິ່ງສຳຄັນ ຄແມ່ນທ່ານບໍ່ຕ້ອງການເຈລະຈາກັບພັກອື່ນເພື່ອຈັດຕັ້ງລັດຖະບານປະສົມ. ສ່ວນຜູ້ນຳພັກສັງຄົມປະຊາທິປະໄຕ (Social Democrats) ທີ່ເປັນພັກຝ່າຍຄ້ານຫຼັກ ນຳໂດຍທ່ານ Rui Rio ໄດ້ຍອມຮັບຕໍ່ການປະລາໄຊ ແລະ ຈະລາອອກຈາກຕຳແໜ່ງ ເພື່ອສະແດງຄວາມຮັບຜິດຊອບຕໍ່ຜົນການເລືອກຕັ້ງໃນຄັ້ງນີ້.

**6). ເຢຍລະມັນ**

ໃນວັນທີ 13/2/2022, ເຢຍລະມັນ ໄດ້ມີການເລືອກຕັ້ງປະທານາທິບໍດີ. ຜົນການເລືອກຕັ້ງ ແມ່ນ ທ່ານ Frank-Walter Steinmeier, ອາຍຸ 66 ປີ, ຜູ້ແທນຈາກພັກສັງຄົມປະຊາທິປະໄຕ (SPD) ໄດ້ຮັບເລືອກຕັ້ງດຳລົງຕຳແໜ່ງປະທານາທິບໍດີ ເຢຍລະມັນ ອີກໜຶ່ງສະໄໝ ດ້ວຍຄະແນນສຽງ 1.045 ສຽງ ເທົ່າກັບ 78,04% ຈາກສຽງ ຂອງສະມາຊິກສະພາ (Bundestag members) ແລະ ສະມາຊິກສະພາ ຂອງ ບັນດາລັດ (State electors) ຂອງ ເຢຍລະມັນ ທັງໝົດ 1.472 ສຽງ. ສ່ວນ ທ່ານ Max Otte ຈາກພັກ CDU ໄດ້ພຽງ 140 ສຽງ, ເທົ່າກັບ 10,45%; ສ່ວນທ່ານ Gerhard Trabert, ຜູ້ສະໝັກເອກະລາດ ໄດ້ 96 ສຽງ, ເທົ່າກັບ 7,17%. ການເລືອກຕັ້ງຄັ້ງນີ້ ຈັດຂຶ້ນພາຍໃຕ້ກອງປະຊຸມສະໄໝພິເສດ (ສະໄໝທີ 17) ຂອງສະຫະພັນເຢຍລະມັນ (Federal Convention) ໂດຍການເຂົ້າຮ່ວມຂອງບັນດາສະມາຊິກສະພາທີ່ກ່າວມາຂ້າງເທິງນີ້.

**3. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ຍັງສືບຕໍ່ເພີ່ມຂຶ້ນ ໂດຍສະເພາະຈາກສາຍພັນ Omicron ທີ່ໄດ້ແຜ່ລະບາດຢ່າງໄວວາ ກວມເອົາ 93% ຂອງຜູ້ທີ່ຕິດເຊື້ອໂຄວິດ ທົ່ວໂລກ, ໃນນັ້ນ ຂົງເຂດເອີລົບ ເປັນເຂດທີ່ມີການລະບາດຫຼາຍທີ່ສຸດ. ແນວໃດກໍຕາມ, WHO ໄດ້ຮຽກຮ້ອງໃຫ້ປະເທດຕ່າງໆ ຄ່ອຍໆຜ່ອນຜັນບັນດາມາດຕະການຈຳກັດທີ່ວາງອອກ, ແຕ່ບໍ່ໃຫ້ຍົກເລີກມາດຕະການທັງໝົດ ເພາະຕົວເລກການລະບາດໃນທົ່ວໂລກຍັງສູງ. ເຢຍລະມັນ ແລະ ບາງລັດ ຂອງສະຫະລັດອາເມລິກາ ກໍໄດ້ເລີ່ມຍົກເລີກມາດຕະການໃສ່ໜ້າກາກ, ເປັນສ່ວນໜຶ່ງຂອງຄວາມພະຍາຍາມເຮັດໃຫ້ປະຊາຊົນ ກັບມາດຳລົງຊີວິດເປັນປົກກະຕິ. ສ. ເກົາຫຼີ ໄດ້ອະນຸຍາດໃຫ້ບັນດາໂຮງຮຽນຕ່າງໆ ຕັດສິນໃຈກ່ຽວກັບວິທີການຮຽນຂອງຕົນ, ສືບຕໍ່ຮຽນແບບເຊິ່ງໜ້າ ຫຼື ປ່ຽນເປັນການຮຽນແບບທາງໄກ ໂດຍອີງຕາມສະພາບການແຜ່ລະບາດຢູ່ແຕ່ລະໂຮງຮຽນ. ສ່ວນທາງການໄທ ມີແຜນຈັດການເຈລະຈາ ກັບ ສປ ຈີນ ແລະ ມາເລເຊຍ ໃນໄວໆນີ້ ກ່ຽວກັບການເປີດການທ່ອງທ່ຽວສອງຝ່າຍໃນຮູບແບບ travel bubble ເພື່ອຊຸກຍູ້ຂະແໜງການທ່ອງທ່ຽວທີ່ສຳຄັນຂອງຕົນ. ໃນຂະນະທີ່ ສປ ຈີນ, ຍັງສືບຕໍ່ເຄັ່ງຄັດບັນດາມາດຕະການປ້ອງກັນໂຄວິດ-19 ໂດຍສະເພາະ

ແມ່ນການປິດເມືອງ, ປິດການດໍາເນີນທຸລະກິດທີ່ບໍ່ຈໍາເປັນ, ປິດໂຮງຮຽນ ຖ້າວ່າເມືອງໃດ ພົບຜູ້ຕິດເຊື້ອໃໝ່. ສໍາລັບປະເທດອາຊຽນ, ອິນໂດເນເຊຍ, ຟີລິບປິນ, ມາເລເຊຍ, ຫວຽດນາມ, ໄທ ເປັນປະເທດທີ່ມີຕົວເລກຜູ້ຕິດເຊື້ອສູງກວ່າໝູ່ ຕາມລໍາດັບ. ສ່ວນໃນທົ່ວໂລກ, ຮອດວັນທີ 28 ກຸມພາ 2022, ຜູ້ຕິດເຊື້ອໂຄວິດ-19 ມີ 435,631,227 ຄົນ ເພີ່ມຂຶ້ນ 60,604,087 ຄົນ ທຽບໃສ່ເດືອນຜ່ານມາ, ເສຍຊີວິດ 5.966.985 ຄົນ, ເພີ່ມຂຶ້ນ 285,971 ປິ່ນປົວຫາຍດີ 365.866.332 ຄົນ, ເພີ່ມຂຶ້ນ 69,622,160 ຄົນ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ວັນທີ 04 ກຸມພາ 2022, ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ ເພື່ອເຂົ້າຮ່ວມພິທີເປີດກິລາໂອລິມປິກລະດູໜາວ ແລະ ພົບປະກັບ ທ່ານ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ. ສອງຝ່າຍໄດ້ຕີລາຄາສູງ ການພົວພັນຮ່ວມມືຍຸດທະສາດຮອບດ້ານໃນໄລຍະຜ່ານມາ ແລະ ໄດ້ອອກຖະ ແຫຼງການຮ່ວມ ໂດຍໄດ້ປະກາດຍົກລະດັບການພົວພັນໃໝ່ຂຶ້ນເໜືອກວ່າພັນທະມິດທາງການເມືອງ, ພ້ອມທັງຮຽກ ຮ້ອງໃຫ້ອົງການ NATO ຢຸດຕິການຂະຫຍາຍສະມາຊິກ, ໃຫ້ ອາເມລິກາ ປະຖິ້ມແນວຄິດສົງຄາມເຢັນ ແລະ ຄັດ ຄ້ານການສ້າງຕັ້ງກຸ່ມ AUKUS ທີ່ເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງໃນພາກພື້ນ. ພ້ອມກັນນັ້ນ, ສອງຝ່າຍຍັງໄດ້ເພີ່ມທະວີການຮ່ວມມື ເພື່ອຕ້ານການປະຕິວັດສີ, ການແຊກແຊງຈາກພາຍນອກ ແລະ ເຫັນດີສະໜັບສະໜູນຊຶ່ງກັນ ແລະ ກັນ ໃນກອບການພົວພັນສອງຝ່າຍ ແລະ ຫຼາຍຝ່າຍ. ການຢ້ຽມຢາມຄັ້ງນີ້, ສອງຝ່າຍໄດ້ເຊັນສັນຍາຮ່ວມມືຫຼາຍກ່ວາ 15 ສະບັບ ໃນຂະແໜງການຕ່າງໆ ໃນມູນຄ່າ 117,5 ຕື້ໂດລາສະຫະລັດ, ລວມທັງສັນຍາ ຊື້ - ຂາຍ ນໍ້າມັນ 100 ລ້ານໂຕນໃນ 10 ປີຕໍ່ໜ້າ, ມູນຄ່າ 80 ຕື້ໂດລາສະຫະລັດ, ແກັສທໍາມະຊາດ, ລະບົບດາວທຽມ GLONASS ແລະ ອື່ນໆ.

ວັນທີ 07 - 11/2/2022, ທ່ານ ແອນໂທນີ ບຣິງເກັນ, ລັດຖະມົນຕີຕ່າງປະເທດ ອາເມລິກາ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ບັນດາປະເທດໃນຂົງເຂດອາຊີ - ປາຊີຟິກ ເຊັ່ນ: ອົດສະຕຣາລີ, ຟີຈີ ແລະ ເກາະຮາວາຍ ຕາມລໍາດັບ. ການຢ້ຽມຢາມດັ່ງກ່າວ, ທ່ານ ບຣິງເກັນ ໄດ້ເຂົ້າຮ່ວມກອງປະຊຸມລັດຖະມົນຕີຕ່າງ ປະເທດ ຂອງກຸ່ມ Quad (ສ.ອາເມລິກາ, ອົດສະຕຣາລີ, ຍີ່ປຸ່ນ ແລະ ອິນເດຍ) ທີ່ ອົດສະຕຣາລີ, ປຶກສາຫາລື ແລະ ຮ່ວມມືກັນຫຼາຍບັນຫາ ເປັນຕົ້ນດ້ານມະນຸດສະທໍາ, ການຕໍ່ຕ້ານການກໍ່ການຮ້າຍ, ການແກ້ໄຂບັນຫາອາສະຍາກໍາທາງໄຊເບີ, ຄວາມໝັ້ນຄົງໃນການເດີນເຮືອ ແລະ ຄວາມທ້າທາຍໃນພາກພື້ນອິນໂດ-ປາຊີຟິກ; ຍັງໄດ້ປຶກສາຫາລືກ່ຽວກັບສະຖານະການໃນອູແກຣນ, ຊຶ່ງອາເມລິກາ ໄດ້ອ້າງວ່າ ສ.ລັດເຊຍ ເພີ່ມກໍາລັງທະຫານຕາມຊາຍແດນທີ່ຕິດກັບອູແກຣນ ເປັນການຄຸກຄາມຕໍ່ລະບຽບໂລກ; ບັນຫາໃນແຫຼມເກົາຫຼີ ແລະ ກະກຽມກອງປະຊຸມຜູ້ນໍາປະເທດກຸ່ມ Quad ທີ່ຈະຈັດຂຶ້ນຢູ່ ຍີ່ປຸ່ນ ໃນຕໍ່ໜ້າ. ພ້ອມກັນນັ້ນ, ອາເມລິກາ ໄດ້ອະນຸມັດຂາຍອຸປະກອນການທະຫານຮັບໃຊ້ເຂົ້າໃນການຮັກສາ ແລະ ປ້ອງກັນລູກສອນໄຟໜ້າດິນສູ່ອາກາດ ມູນຄ່າ ປະມານ 100 ລ້ານໂດລາສະຫະລັດ ໃຫ້ ໄຕຫວັນ; ສປ ຈີນ ໄດ້ຮຽກຮ້ອງໃຫ້ອາເມລິກາ ຢຸດຕິການແຊກແຊງເຂົ້າກິດຈະການພາຍໃນ ຂອງ ຈີນ, ເຄົາລົບໃນຫຼັກການຈີນດຽວ, ຮັກສາສັນຍາສາຍພົວພັນລະຫວ່າງສອງປະເທດ; ສ່ວນການເຄື່ອນໄຫວ ຂອງ ກຸ່ມ Quad ນັ້ນ ເປັນກົນໄກເຄື່ອງມືທໍາລາຍຄວາມສາມັກຄີ ແລະ ການຮ່ວມມືສາກົນ ຂອງ ບັນດາປະເທດໃນຂົງເຂດອາຊີ-ປາຊີຟິກ, ຮຽກຮ້ອງໃຫ້ປະເທດທີ່ກ່ຽວຂ້ອງປະຖິ້ມແນວຄິດສົງຄາມເຢັນທີ່ຫຼ້າສະໄໝ ກໍ່ຄວາມຂັດແຍ່ງ, ຫັນມາຮ່ວມມືແບບຫຼາຍຝ່າຍ ເພື່ອຄວາມສະຫງົບ ແລະ ສັນຕິພາບໃນພາກພື້ນ.

ວັນທີ 15-17/2/2022, ກໍາປູເຈຍ ໃນຖານະປະທານອາຊຽນ ປີ 2022 ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ແບບວົງແຄບ (AMM Retreat) ຢູ່ນະຄອນຫຼວງພະນົມເປັນ, ກໍາປູເຈຍ (ໃນຮູບແບບເຊິ່ງໜ້າ ມີ ກໍາປູເຈຍ, ອິນໂດເນເຊຍ, ມາເລເຊຍ, ສິງກະໂປ, ຟີລິບປິນ, ສປປ ລາວ, ແລະ ເລຂາທິການອາຊຽນ; ໃນຮູບແບບທາງໄກ ມີ ໄທ, ຫວຽດນາມ, ບຣູໄນ) ໂດຍການເປັນປະທານ ຂອງ ທ່ານ Prak Sokhonn, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີການຕ່າງປະເທດຂອງກໍາປູເຈຍ. ກອງປະຊຸມຄັ້ງນີ້ ໄດ້ປຶກສາຫາລືຫຼາຍບັນຫາສໍາຄັນ ເປັນຕົ້ນການຜັນຂະຫຍາຍບັນດາຂໍ້ຕົກລົງ ຂອງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38 ແລະ 39, ການສະໜັບສະໜູນບູລິມະສິດ ສໍາລັບການເປັນປະ ທານອາຊຽນ ຂອງ ກໍາປູເຈຍ ພາຍໃຕ້ຄໍາຂວັນ: "ອາຊຽນ ແກ້ໄຂສິ່ງທ້າທາຍ

ຮ່ວມກັນ (ASEAN A.C.T.: Addressing Challenges Together)" ເຊັ່ນ: 1) ການຮັດແໜ້ນຄວາມເປັນແກນກາງອາຊຽນໃນໂຄງສ້າງພາກພື້ນ ເພື່ອປົກປັກຮັກສາສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມສົມບູນພູນສຸກ; ການຮ່າງວິໄສທັດປະຊາຄົມອາຊຽນ ຫຼັງປີ 2025 ແລະ ການບັນລຸການພັດທະນາແບບຍືນຍົງ; ການສົ່ງເສີມການປະກອບສ່ວນຂອງພາກພື້ນຕໍ່ສາກົນ; ຮັດ ແໜ້ນ ແລະ ຂະຫຍາຍການຮ່ວມມືກັບຄູ່ຮ່ວມມືພາຍນອກ; 2) ການເລັ່ງລັດຄວາມພະຍາຍາມໃນການຟື້ນຟູ ຈາກພະຍາດໂຄວິດ-19; ສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການເຊື່ອມໂຍງພາກພື້ນ; ການຮັກສາລະດັບການຂະຫຍາຍຕົວດ້ານເສດຖະກິດ ແລະ ຄວາມສົມບູນພູນສຸກໃນໄລຍະຍາວ; 3) ເສີມຂະຫຍາຍຄຸນຄ່າ, ຄວາມຮັບຮູ້ ແລະ ເອກະລັກຂອງອາຊຽນ; ສົ່ງເສີມການພັດທະນາຊັບພະຍາກອນມະນຸດ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ; ການສົ່ງເສີມດ້ານສຸຂະພາບ, ຊີວິດການເປັນຢູ່ທີ່ດີ ແລະ ການປົກປ້ອງສັງຄົມຂອງປະຊາຊົນອາຊຽນ. ຕໍ່ສະຖານະການມຽນມາ, ອາຊຽນ ໄດ້ເຫັນດີ ຄື: ສືບຕໍ່ຄວາມພະຍາຍາມ ໃນການສ້າງສັນຕິພາບ, ສະຖຽນລະພາບ ແລະ ຄວາມປອງດອງຊາດໃນມຽນມາ; ອາຊຽນ ມີຄວາມກັງວົນຢ່າງຍິ່ງ ຕໍ່ສະພາບການທີ່ເກີດຂຶ້ນໃນມຽນມາ ແລະ ເຫັນດີກັບຄວາມພະຍາຍາມໃນການແກ້ໄຂບັນຫາມຽນມາ ລວມທັງການຢ້ຽມຢາມມຽນມາ ຂອງນາຍົກລັດຖະມົນຕີກຳປູເຈຍ ໃນໄລຍະຕົ້ນເດືອນ ມັງກອນ 2022 ຜ່ານມາ; ຮຽກຮ້ອງໃຫ້ບັນດາຝ່າຍຂັດແຍ່ງ ຂອງມຽນມາ ຫັນໜ້າເຂົ້າຫາກັນ ເຈລະຈາ ເພື່ອຄວາມປອງດອງພາຍໃນມຽນມາ. ອາຊຽນ ຈະສືບຕໍ່ຊ່ວຍເຫຼືອດ້ານມະນຸດສະທຳແກ່ມຽນມາ; ເຫັນດີໃຫ້ ທ່ານ Prak Sokhonn, ທູດພິເສດອາຊຽນ ປະຈຳມຽນມາ ສືບຕໍ່ພາລະກິດເປັນຕົວແທນໃນການແກ້ໄຂບັນຫາມຽນມາ.

**3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ**

ສະພາບການທີ່ພົ້ນເດັ່ນໃນຂົງເຂດນີ້ ແມ່ນຄວາມເຄັ່ງຕຶງ ລະຫວ່າງ ລັດເຊຍ - ອາເມລິກາ, NATO ແລະພັນທະມິດ ໃນບັນຫາ ອູແກຣນ, ເຊິ່ງ ອາເມລິກາ ແລະ NATO ປະຕິເສດຂໍ້ສະເໜີ ຂອງ ລັດເຊຍ ກ່ຽວກັບຄວາມໝັ້ນຄົງ ແລະ ຈຳກັດການຂະຫຍາຍສະມາຊິກ NATO ເຂົ້າໄປຂົງເຂດເອີລົບຕາເວັນອອກ ທີ່ລັດເຊຍໄດ້ສະເໜີຕໍ່ອາເມລິກາ ແລະ NATO ໃນທ້າຍປີ 2021. ເພື່ອຄວາມສະຫງົບ ແລະ ປົກປັກຮັກສາອະທິປະໄຕ-ເຂດແດນ ຂອງບັນດາປະເທດເອີລົບຕາເວັນອອກ, ປະທານາທິບໍດີລັດເຊຍ Vladimir Putin ໄດ້ລົງນາມຮັບຮູ້ອຳນາດອະທິປະໄຕຂອງ ສາທາລະນະລັດ ປະຊາຊົນ ດອນບາສ (Donetsk People's Republic) ແລະ ສາທາລະນະລັດ ປະຊາຊົນ ລູຮັນ (Luhansk People's Republic) ໃນວັນທີ 21 ກຸມພາ 2022 ແລະ ການສົ່ງກຳລັງທະຫານເຂົ້າໄປປົກປ້ອງສອງລັດດັ່ງກ່າວ. ຫຼັງຈາກນັ້ນ, ແຕ່ວັນທີ 24 ກຸມພາ 2022 ເປັນຕົ້ນມາ ໄດ້ເກີດການໂຈມຕີລະຫວ່າງ ລັດເຊຍ ແລະ ອູແກຣນ ຢູ່ບາງເຂດພື້ນທີ່ການທະຫານ ຂອງ ອູແກຣນ. ອາເມລິກາ ແລະ ຝ່າຍຕາເວັນຕົກ ໄດ້ປະນາມການປະຕິບັດການທາງທະຫານດັ່ງກ່າວຂອງລັດເຊຍ ແລະ ໄດ້ຮ່ວມກັນຂວ້ຳບາດທາງເສດຖະກິດຕໍ່ລັດເຊຍ ໂດຍການຕັດບັນດາທະນາຄານໃຫຍ່ຂອງລັດເຊຍ ອອກຈາກລະບົບການເງິນ SWIFT ແລະ ໄດ້ສົ່ງອຸປະກອນການທະຫານໄປຊ່ວຍອູແກຣນ ເຊັ່ນ: ເຢຍລະມັນ ໄດ້ປະກາດລະງັບໂຄງການທໍ່ສົ່ງນ້ຳມັນ Nord Stream 2, ປິດເຂດນ່ານຟ້າຂອງຕົນຕໍ່ຍົນພົນລະເຮືອນ ຂອງລັດເຊຍ, ສະໜອງອາວຸດຕ້ານລົດຖັງຈຳນວນ 1.000 ຊຸດ ແລະ ລູກສອນໄຟຍິງຈາກ ໜ້າດິນສູ່ອາກາດ Stinger ຈຳນວນ 500 ລູກ; ອາເມລິກາ ໄດ້ຊ່ວຍອາວຸດ ມູນຄ່າ 350 ລ້ານໂດລາສະຫະລັດ ຕື່ມອີກ; ແບນຊິກ ຈະສົ່ງກຳລັງທະຫານ 300 ຄົນ ເຂົ້າໄປຍັງ ຣູມານີ ເພື່ອເຂົ້າຮ່ວມກັບ ອົງການນາໂຕ; ແບນຊິກ ຈະສະໜອງປືນກົນ 2.000 ກະບອກ ແລະ ນ້ຳມັນ 3.800 ໂຕນ ໃຫ້ກອງທັບ ອູແກຣນ; ສ.ເຊັກ ໄດ້ອະນຸມັດການສົ່ງອາວຸດ ແລະລູກປືນທີ່ມີມູນຄ່າ 8,57 ລ້ານໂດລາສະຫະລັດ; ສະໂລວາກີ ຈະສົ່ງລູກປືນໃຫຍ່ ແລະ ນ້ຳມັນເຊື້ອໄຟ ມີມູນຄ່າ 12,39 ລ້ານ ໂດລາສະຫະລັດ ໄປໃຫ້ ອູແກຣນ; ສ່ວນ ຝຣັ່ງ ຈະສົ່ງອຸປະກອນປ້ອງກັນທາງທະຫານ ໄປໃຫ້ ອູແກຣນ; ອົດສະຕຣາລີ ປະກາດສົ່ງອາວຸດໄປໃຫ້ ອູແກຣນ ໂດຍຜ່ານ ອົງການ NATO; ໂຮນລັງ ສົ່ງລູກສອນໄຟນຳວິຖີ ແລະ ປືນໃຫຍ່ ໄປຊ່ວຍກຳລັງປະກອບອາວຸດຂອງ ອູແກຣນ; ສ່ວນຫຼາຍປະເທດໃນເຂດບານຕິກ ມີມາດຕະການຕໍ່ລັດເຊຍເຊັ່ນດຽວກັນ; ຍີ່ປຸ່ນ ໄດ້ປະກາດອາຍັດຊັບສິນຂອງປະທານາທິບໍດີລັດເຊຍ, ແຕ່ຈະຊ່ວຍ ອູແກຣນ ໂດຍໃຫ້ເງິນ 100 ລ້ານໂດລາ ເພື່ອຊ່ວຍເຫຼືອດ້ານມະນຸດສະທຳປະຊາຊົນອູແກຣນ, ນອກຈາກເງິນກູ້ຢືມໃຫ້ອູແກຣນ 100 ລ້ານໂດລາ

ກ່ອນໜ້ານີ້; ສິ່ງກະໂປ ປະກາດຈະຄວບຄຸມການສົ່ງອອກບັນດາວັດຖຸທີ່ໃຊ້ປະກອບເປັນອາວຸດຕ່າງໆ ໄປຍັງລັດເຊຍ ແລະ ຈະຂວ້ຳບາດບັນດາທະນາຄານຂອງລັດເຊຍ ບໍ່ໃຫ້ເຄື່ອນໄຫວທຸລະກຳທາງການເງິນໃນສິງກະໂປ.

ຕໍ່ກັບການເຄື່ອນໄຫວຕ້ານລັດເຊຍ ຂອງ ບັນດາປະເທດດັ່ງກ່າວ, ລັດເຊຍ ຍັງຢືນຢັນວ່າ ບໍ່ມີແຜນການຍຶດເອົາດິນແດນຂອງ ອູແກຣນ ແລະວ່າ ພຽງແຕ່ໃຊ້ອາວຸດຍຸດໂທປະກອນໂຈມຕີ ພື້ນຖານໂຄງລ່າງທາງທະຫານ ຂອງ ອູແກຣນ ທີ່ມີເປົ້າໝາຍຊັດເຈນຢູ່ແລ້ວເທົ່ານັ້ນ ແລະ ບໍ່ທຳຮ້າຍພົນລະເຮືອນ; ລັດເຊຍ ມີເຄື່ອງມື ແລະ ມີຊັບພະຍາກອນ (resources) ສາມາດສະໜອງເງິນສົດໃຫ້ສັງຄົມ, ຮັບປະກັນສະພາບຄ່ອງ, ມີສະຖຽນລະພາບທາງດ້ານລະບົບການເງິນ, ມີລະບົບການເຮັດທຸລະກຳພາຍໃນ (Financial Message Transfer System ຫຼື ເອີ້ນຫຍໍ້ວ່າ SPFS) ບໍ່ຂຶ້ນກັບລະບົບ SWIFT ຂອງ ຕາເວັນຕົກ, ສາມາດໂອນເງິນ ແລະ ພົວພັນດ້ານການເງິນກັບຕ່າງປະເທດໄດ້. ພ້ອມກັນນັ້ນ, ທາງການລັດເຊຍ ໄດ້ຕອບໂຕ້ບັນດາປະເທດຕາເວັນຕົກ ດ້ວຍການປະກາດຫ້າມສາຍການບິນ ຈາກ 36 ປະເທດ ບໍ່ໃຫ້ໃຊ້ນ່ານຟ້າຂອງລັດເຊຍ.

ທ່າມກາງການຄັດຄ້ານຢ່າງຮຸນແຮງຂອງຕາເວັນຕົກ ຕໍ່ລັດເຊຍ, ຍັງມີຫຼາຍປະເທດ ທີ່ສະແດງຄວາມເຂົ້າໃຈ ແລະ ເຫັນໃຈ ຕໍ່ຄວາມຈຳເປັນໃນການປະຕິບັການທາງການທະຫານຂອງລັດເຊຍ ເພື່ອຄວາມໝັ້ນຄົງ ຂອງ ລັດເຊຍ ແລະ ຫຼາຍປະເທດໃນເອີລົບຕາເວັນອອກ ເຊັ່ນ: ເບລາຣຸດຊີ ພ້ອມໃຫ້ການສະໜັບສະໜູນ ແລະ ຮ່ວມມືລັດເຊຍ, ປະທານາທິບໍດີຊີຣີ ໄດ້ລົມສາຍກັບປະທານາທິບໍດີລັດເຊຍ ສະແດງຄວາມຊົມເຊີຍ ທີ່ລັດເຊຍ ສາມາດຈັດການກັບພວກຫົວຮຸນແຮງໃນອູແກຣນໄດ້ ແລະ ວ່າ ເປັນການແກ້ໄຂ ໃຫ້ຖືກຕ້ອງ ແລະ ເປັນການຟື້ນຟູລະບຽບໂລກ; ມຽນມາ ສະໜັບສະໜູນລັດເຊຍວ່າ ເປັນການດຳເນີນການທີ່ຖືກຕ້ອງ ເພື່ອຮັກສາອຳນາດອະທິປະໄຕຢ່າງຍືນຍົງ ຂອງລັດເຊຍ ທີ່ຖືກຄຸກຄາມຈາກ NATO ຕະຫຼອດມາ, ທັງເປັນການປົກປ້ອງປະຊາຊົນຂອງສອງລັດເອກະລາດ ດອນບັສ ແລະ ລູຮັນ ບໍ່ໃຫ້ຖືກຂ້າລ້າງເຜົ່າພັນ ຈາກລັດທິຫົວຮຸນແຮງ. ໃນຂະນະທີ່ ບັນດາປະເທດອາຊຽນ ໄດ້ສະແດງຄວາມກັງວົນ ຕໍ່ສະຖານະການທີ່ເກີດຂຶ້ນ ແລະ ໃຫ້ສອງຝ່າຍ ແກ້ໄຂບັນຫາດັ່ງກ່າວ ຜ່ານການທູດ. ສປ ຈີນ ໄດ້ຄັດຄ້ານການດຳເນີນການຂວ້ຳບາດພຽງຝ່າຍດຽວ ຕໍ່ລັດເຊຍ ແລະ ຮຽກຮ້ອງໃຫ້ທຸກຝ່າຍ ເຈລະຈາຫາຂໍ້ຍຸດຕິຄວາມຂັດແຍ່ງ ຜ່ານຊ່ອງທາງການທູດ. ປະທານາທິບໍດີເບຣຊິນ ໄດ້ຖະແຫຼງວ່າ ເບຣຊິນ ຈະບໍ່ເລືອກຝ່າຍໃດຝ່າຍໜຶ່ງ, ຂໍເປັນຝ່າຍເປັນກາງ; ເບຣຊິນ ເຊື່ອວ່າ ລັດເຊຍ ຈະບໍ່ປະຕິບັດການທີ່ກໍ່ໃຫ້ເກີດການນອງເລືອດຄັ້ງໃຫຍ່, ຜູ້ນຳລັດເຊຍ ເປັນຜູ້ຍິ່ງໃຫຍ່ ບໍ່ປາດຖະໜາການສັງຫານໝູ່ແຕ່ຢ່າງໃດ. ສ່ວນ ອິນເດຍ, ປາກິດສະຖານ ແລະ ອິດສະລາແອນ ກໍໄດ້ປະກາດຄວາມເປັນກາງ ຕໍ່ສະຖານະການດັ່ງກ່າວ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ວັນທີ 08 ກຸມພາ 2022, ທີ່ນະຄອນຫຼວງ ວຽນນາ ປະເທດໂອຕຣິດ, ອີຣານ ແລະ ອາເມລິກາ ໄດ້ກັບຄືນມາເຈລະຈາຟື້ນຟູຂໍ້ຕົກລົງນິວເຄຼຍອີຣານ ປີ 2015 Joint Comprehensive Plan of Action (JCPOA) ທີ່ ອາເມລິກາ ຖອນຕົວອອກໃນປີ 2018, ເຊິ່ງອາເມລິກາ ມີຄຳເຫັນວ່າ ການເຈລະຈາຄັ້ງນີ້ ຈະເປັນການປານີປານອມຄັ້ງສຸດທ້າຍ. ສ່ວນ ອີຣານ ໄດ້ສະເໜີຈະຍອມຮັບບາງຂໍ້ຈຳກັດ ວ່າດ້ວຍການພັດທະນາໂຄງການ ນິວເຄຼຍ ເພື່ອເປັນການຢັ້ງຢືນ ແລະ ຮຽກຮ້ອງໃຫ້ອົງການສະຫະປະຊາຊາດ, ອາເມລິກາ ແລະ ບັນດາປະເທດຕາເວັນຕົກຍຸດຕິມາດຕະການລົງໂທດຕໍ່ ອີຣານ, ຖ້າຫາກ ອາເມລິກາ ຍັງສືບຕໍ່ນຳໃຊ້ມາດຕະການ ແລະ ການປະຕິບັດບໍ່ສອດຄ່ອງກັບທາງວາຈາເໝືອນດັ່ງຜ່ານມາ ຈະເປັນອັນສຳຄັນ ທີ່ເຮັດໃຫ້ບໍ່ສາມາດຕົກລົງກັນໄດ້. ສອງຝ່າຍຍັງລໍຖ້າການຕັດສິນໃຈຄັ້ງສຸດທ້າຍກ່ອນຈະມີມະຕິຕົກລົງຮ່ວມກັນ. ສ່ວນ ທູດຈີນ ປະຈຳ ສປຊ ສະໜັບສະໜູນຈຸດຢືນ ຂອງ ອີຣານ ແລະ ວ່າການເຈລະຈາມີທ່າອຽງໄປທາງທີ່ດີ ທີ່ຈະເຂົ້າສູ່ຂັ້ນຕອນສຸດທ້າຍ.

ແຫຼ່ງຂ່າວອ້າງອີງ :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, Rodong, The Guardian, CRI, Khmer Times, Jakarta post, Aljazeera, RT, Kpl, Sputnik, Yonhap, AFP, NHK, Aljazeera, CGTN, Reuters

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານ ສະມາຄົມມິດຕະພາບຂອງລາວກັບຕ່າງປະເທດ ລະຫວ່າງ ຊຸດເກົ່າ ແລະ ຊຸດໃໝ່






ໃນວັນທີ 24 ກຸມພາ 2022, ທີ່ສູນຮ່ວມມືສາກົນ ແລະ ຝຶກອົບຮົມ (ICTC) ໄດ້ມີພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານສະມາຄົມມິດຕະພາບຂອງລາວກັບຕ່າງປະເທດ ລະຫວ່າງ ຊຸດເກົ່າ ແລະ ຊຸດໃໝ່, ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍປະທານ ແລະ ຄະນະບໍລິຫານງານສະມາຄົມມິດຕະພາບຂອງລາວກັບຕ່າງປະເທດ ຊຸດເກົ່າ ແລະ ຊຸດໃໝ່ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ. ສະຫາຍ ດວງຕາ ຈູມພາວັນ, ຫົວໜ້າກົມຄຸ້ມຄອງ-ພະນັກງານ, ຕາງໜ້າຄະນະຈັດຕັ້ງສູນກາງພັກ ໄດ້ຜ່ານມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ ວ່າດ້ວຍການແຕ່ງຄະນະບໍລິຫານງານສະມາຄົມມິດຕະພາບ ຂອງ ລາວກັບຕ່າງປະເທດ ຈຳ ນວນ 17 ສະມາຄົມ.

ພາຍຫຼັງຜ່ານມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ, ໄດ້ມີພິທີເຊັນບົດບັນທຶກ ມອບ-ຮັບ ໜ້າທີ່ ລະຫວ່າງ ປະທານສະມາຄົມມິດຕະພາບຂອງລາວກັບຕ່າງປະເທດ ຜູ້ເກົ່າ ແລະ ຜູ້ໃໝ່ ໂດຍການເປັນສັກຂີພະຍານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ພາກສ່ວນກ່ຽວຂ້ອງ.

## 2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບລັດຖະມົນຕີຕ່າງປະເທດອົດສະຕຣາລີ



ວັນທີ 25 ກຸມພາ 2022, ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ຕ້ອນຮັບການມາຢ້ຽມຄຳນັບຂອງທ່ານ ນາງ ມາຣິສ ເພນ (Marise Payne), ລັດຖະມົນຕີກະຊວງການຕ່າງປະເທດອົດສະຕຣາລີ ທັງເປັນລັດຖະມົນຕີຮັບຜິດຊອບວຽກແມ່ຍິງ ອົດສະຕຣາລີ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແຕ່ວັນທີ 24-25 ກຸມພາ 2022. ທ່ານ ທອງສະຫ້ວນ ພົມວິຫານ ໄດ້ສະແດງຄວາມຕ້ອນຮັບ ແລະ ຊົມເຊີຍຕໍ່ການມາຢ້ຽມຢາມ ສ ປປ ລາວ ກໍ່ຄື ການຍາດໂອກາດເຂົ້າມາພົບປະເຮັດວຽກຢູ່ ຄະນະພົວພັນຕ່າງປະເທດສູນກາງພັກ ໃນຄັ້ງນີ້, ອັນໄດ້ເປັນການປະກອບສ່ວນສຳຄັນ ເຂົ້າໃນການເສີມຂະຫຍາຍ ສາຍພົວພັນມິດຕະພາບອັນດີງາມ ລະຫວ່າງລາວ-ອົດສະຕຣາລີ ທີ່ພວມຢູ່ໃນບັນຍາກາດ ແຫ່ງ ການສະເຫຼີມສະຫຼອງ ວັນສ້າງສາຍພົວພັນການທູດຄົບຮອບ 70 ປີ ແລະ ເຫັນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ອົດສະຕຣາລີ ໃນຕະຫຼອດໄລຍະ 70 ປີຜ່ານມາ ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍເປັນກ້າວໆມາ; ພ້ອມທັງ ໄດ້ແຈ້ງໃຫ້ຊາບສະພາບພົ້ນເດັ່ນຂອງພັກ, ລັດລາວ ໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ພາຍໃຕ້ການນຳພາ ຂອງ ພັກ ປປ ລາວ ທີ່ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ, ໂດຍສະເພາະ ຜົນສຳເລັດເບື້ອງຕົ້ນ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ຜົນສຳເລັດໃນການຄວບຄຸມ-ສະກັດກັ້ນ ການແຜ່ລະບາດຂອງ ພະຍາດໂຄວິດ-19 ຢູ່ ສປປ ລາວ; ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອ ຂອງ ລັດຖະບານອົດສະຕຣາລີ ໃນດ້ານການສຶກສາ, ການພັດທະນາຊັບພະຍາກອນມະນຸດ, ສາທາລະນະສຸກ ກໍ່ຄືການຊ່ວຍເຫຼືອອຸປະກອນການແພດ ແລະ ຢາວັກແຊງຕ້ານພະຍາດໂຄວິດ-19 ໃຫ້ແກ່ ພັກ-ລັດ ສປປ ລາວ ຜ່ານມາ ແລະ ຫວັງວ່າຝ່າຍອົດສະຕຣາລີ ຈະສືບຕໍ່ໃຫ້ການຊ່ວຍເຫຼືອ ສປປ ລາວ ໃນດ້ານຕ່າງໆ ຕື່ມອີກໃນຕໍ່ໜ້າ.

### 3. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດ ສາທາລະນະລັດ ສະຫະພັນເຢຍລະມັນ ປະຈໍາ ສປປ ລາວ



ໃນວັນທີ 28 ກຸມພາ 2022, ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນ. ອັນເນັດ ຄະໂນບລ໊ອກ (Annette Knobloch), ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສາທາລະນະລັດ ສະຫະພັນ ເຢຍລະມັນ ປະຈໍາ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍທ່ານທູດທີ່ຖືກແຕ່ງຕັ້ງມາປະຕິບັດໜ້າທີ່ຢູ່ ສປປ ລາວ; ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີ ລະຫວ່າງ ສປປ ລາວ ແລະ ສາທາລະນະລັດ ສະຫະພັນ ເຢຍລະມັນ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ຕະຫຼອດໄລຍະກວ່າຫົກທົດສະວັດ (1958-2022) ແຫ່ງການສ້າງສາຍພົວພັນການທູດນໍາກັນ; ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຢ່າງຫຼວງຫຼາຍຈາກລັດຖະບານ ແລະ ປະຊາຊົນ ເຢຍລະມັນ ໃນໄລຍະຜ່ານມາ ຜ່ານອົງການຈັດຕັ້ງສາກົນ ແລະ ໂດຍກົງ, ເຊິ່ງເປັນການປະກອບສ່ວນເຂົ້າໃນການສ້າງສາພັດທະນາ ສປປ ລາວ. ພ້ອມກັນນັ້ນ, ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຍັງໄດ້ຊ່ວຍເຫຼືອຢາວັກແຊງ ແລະ ອຸປະກອນການແພດ ໃຫ້ແກ່ ສປປ ລາວ; ຊົມເຊີຍທ່ານທູດທີ່ເຄື່ອນໄຫວຢ່າງຫ້າວຫັນດ້ານວຽກງານການທູດປະຊາຊົນ, ສະໜັບສະໜູນສະມາຄົມມິດຕະພາບ ລາວ-ເຢຍລະມັນ ແລະ ໄດ້ເປີດສູນມິດຕະພາບ ລາວ-ເຢຍລະມັນ ທີ່ ວິທະຍາໄລເຕັກນິກການຊ່າງ ລາວ-ເຢຍລະມັນ ໃນວັນທີ 31 ມັງກອນ 2022 ຜ່ານມາ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະເໜີທ່ານທູດໃຫ້ສືບຕໍ່ຊຸກຍູ້ການຮ່ວມມືທາງດ້ານເສດຖະກິດ-ການຄ້າ ແລະ ການລົງທຶນ ໃຫ້ມີບາດກ້າວອັນໃໝ່ຫຼາຍຂຶ້ນໃນອະນາຄົດ, ພ້ອມທັງເຊື່ອໝັ້ນວ່າ ໃນໄລຍະທ່ານທູດມາປະຕິບັດໜ້າທີ່ຢູ່ ສປປ ລາວ ຈະມີການຮ່ວມມືກັນຢ່າງໃກ້ຊິດກັບຂະແໜງການຕ່າງໆ ຂອງ ສປປ ລາວ ເພື່ອສົ່ງເສີມການພົວພັນຮ່ວມມືສອງຝ່າຍ ໃຫ້ນັບມື້ກວ້າງຂວາງ ແລະ ເປັນຮູບປະທໍາຍິ່ງໆຂຶ້ນ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ເຢຍລະມັນ.

## 4. ຮອງຫົວໜ້າ ຄຕພ ອວຍພອນສະຖານທູດ ສປປ ເກົາຫຼີ



ວັນທີ 17 ກຸມພາ 2022, ທ່ານ ວາລະໄຊ ເລັ່ງສະຫວັດ, ກຳມະການພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ເຂົ້າອວຍພອນ ສະຫາຍ ລີຢອງໂຊລ, ເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳ ສປປ ລາວ ໃນໂອກາດ ວັນຄ້າຍວັນເກີດ ຂອງ ສະຫາຍ ກິມເຈີງອິນ, ຜູ້ນຳທີ່ຍິ່ງໃຫຍ່ ຂອງ ປະຊາຊົນ ສປປ ເກົາຫຼີ ຄົບຮອບ 80 ປີ. ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍ ຕໍ່ຜົນງານການນຳພາ ສປປ ເກົາຫຼີ ແລະ ຄວາມເປັນແບບຢ່າງ ຂອງ ສະຫາຍ ກິມເຈີງອິນ, ຜູ້ນຳທີ່ຍິ່ງໃຫຍ່ ຂອງປະຊາຊົນ ສປປ ເກົາຫຼີ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ສະແດງຄວາມຂອບໃຈ ຢ່າງຈິງໃຈ ຕໍ່ ການນຳ ສປປ ເກົາຫຼີ ເວົ້າລວມ ເວົ້າສະເພາະ ແມ່ນ ສະຖານທູດ ສປປ ເກົາຫຼີ ປະຈຳລາວ ທີ່ຍາມໃດ ກໍໄດ້ແລກປ່ຽນບັນຫາຕ່າງໆ ກັບຝ່າຍລາວ ຢ່າງກົງໄປກົງມາ ແລະ ໃຫ້ການສະໜັບສະໜູນ ສປປ ລາວ ໃນເວທີສາກົນຕະຫຼອດມາ.